ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1265 /ອຄ.ສລທ

ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2012

# ແຈ້ງການ

ເຖິງ: ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ
ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ
ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມ, ນັກທຸລະກິດ(ພາຍໃນ ແລະ ຕ່າງປະເທດ)

ເລື່ອງ ປະເພດສິນຄ້າ ແລະ ອັດຕາສ່ວນທຶນ ທີ່ເປີດໃຫ້ຜູ້ລົງທຶນຕ່າງປະເທດປະກອບທຶນ ເພື່ອສ້າງຕັ້ງຫົວໜ່ວຍທຸລະກິດນຳເຂົ້າ ເພື່ອຂາຍຍົກ ຢູ່ສປປ ລາວ

- ອີງຕາມຂໍ້ກຳນົດຂອງມາດຕາ 5 ແລະ ມາດຕາ 8 ຂໍ້ຕົກລົງ, ເລກທີ 0977/ອຄ.ສລທ, ລົງ ວັນທີ 18 ພຶດສະພາ 2012 ;
- ອີງໃສ່ພັນທະໃນສົນທິສັນຍາສາກົນດ້ານການຄ້າ ທີ່ ສປປ ລາວໄດ້ຮັບຮອງ ຫລື ຕົກລົງ.

ດ້ວຍຈຸດປະສົງ, ດ້ານໜຶ່ງ-ເພື່ອສະຫງວນປະເພດທຸລະກິດນຳເຂົ້າ ເພື່ອຂາຍຍົກໄວ້ສຳລັບພົນລະເມືອງລາວ ແລະ ອີກດ້ານໜຶ່ງ ກໍເພື່ອເປີດໃຫ້ຜູ້ລົງທຶນຕ່າງປະເທດ ໄດ້ປະກອບທຶນຮ່ວມກັບຄົນລາວໃນການສ້າງຕັ້ງ ແລະ ດຳເນີນທຸລະກິດນຳເຂົ້າ ເພື່ອຂາຍຍົກບາງປະເພດສິນຄ້າ ໃນອັດຕາສ່ວນທຶນທີ່ສົມເຫດສົມຜົນ ຕາມການກຳນົດ ຫລື ຕາມທີ່ປະເທດເຮົາໄດ້ໃຫ້ພັນທະໃນສົນທິສັນຍາສາກົນດ້ານການຄ້າ.

ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດກ່ຽວກັບປະເພດສິນຄ້າເປີດ ແລະ ບໍ່ເປີດ ໃຫ້ຜູ້ລົງທຶນຕ່າງປະເທດ ຮ່ວມທຶນສ້າງຕັ້ງຫົວໜ່ວຍທຸລະກິດນຳເຂົ້າ ເພື່ອຂາຍຍົກ ຢູ່ສປປ ລາວ ດັ່ງນີ້:

1. ປະເພດສິນຄ້າທີ່ ສປປ ລາວ ເປີດໃຫ້ຜູ້ລົງທຶນຕ່າງປະເທດສາມາດຮ່ວມທຶນ ເພື່ອຂຶ້ນທະບຽນວິສາຫະກິດສ້າງຕັ້ງຫົວໜ່ວຍທຸລະກິດນຳເຂົ້າ ເພື່ອຂາຍຍົກ ຢູ່ສປປ ລາວ ໄດ້ ໃນອັດຕາສ່ວນທຶນບໍ່ເກີນ 49 ສ່ວນຮ້ອຍຂອງທຶນຈົດທະບຽນວິສາຫະກິດທັງໝົດ ປະກອບດ້ວຍ:

- ປະເພດແຜນແພ (Textile). ພາຍໃຕ້ຂອບສັນຍາອາຊຽນກອນເອົາລະຫັດ 62231 ແລະ 62232, ສ່ວນລະບົບ ISIC ແມ່ນບອນໃນລະຫັດ 4641;

- ປະເພດເຄື່ອງນຸ່ງຫົ່ມ (Clothing). ພາຍໃຕ້ຂອບສັນຍາອາຊຽນກວມເອົາລະຫັດ 62233 ແລະ 62234, ສ່ວນລະບົບ ISIC ແມ່ນນອນໃນລະຫັດ 4641;
- ປະເພດເກີບ, ຖົງຕີນຕ່າງໆ (Footwear). ລະຫັດພາຍໃຕ້ຂອບສັນຍາອາຊຽນແມ່ນ 62235, ສ່ວນລະບົບ ISIC ແມ່ນນອນໃນລະຫັດ 4641.

ການປ່ຽນແປງເພີ່ມ ຫລື ຫຼຸດລາຍການປະເພດສິນຄ້າ ແລະ ອັດຕາສ່ວນທຶນຂອງແຕ່ລະປະເພດສິນຄ້າ ຈະແຈ້ງໃຫ້ຊາບໃນແຕ່ລະໄລຍະ.

2. ນອກຈາກປະເພດສິນຄ້າ ຕາມທີ່ກ່າວມາໃນຂໍ້ໜຶ່ງຖັດເທິງນີ້ ແມ່ນບໍ່ເປີດ ແລະ ບໍ່ອະນຸຍາດໃຫ້ຂຶ້ນທະບຽນວິສາຫະກິດ ຮ່ວມທຶນກັບຜູ້ລົງທຶນຕ່າງປະເທດໄດ້.

3. ຫົວໜ່ວຍທຸລະກິດນຳເຂົ້າ ເພື່ອຂາຍຍົກສິນຄ້າ ທີ່ມີທັງປະເພດສິນຄ້າເປີດ ແລະ ບໍ່ເປີດ ແມ່ນບໍ່ອະນຸຍາດໃຫ້ຜູ້ລົງທຶນຕ່າງປະເທດ ຮ່ວມທຶນນຳໄດ້.

4. ໃນກໍລະນີລະເມີດ ຂໍ້ກຳນົດຕາມທີ່ໄດ້ກ່າວມາໃນຂໍ້ 2 ແລະ ຂໍ້ 3 ຂອງແຈ້ງການສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 238 ຂອງກົດໝາຍວ່າດ້ວຍວິສາຫະກິດຢ່າງເຂັ້ມງວດ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ



ດຣ. ນາມ ວິຍະເກດ